# ເພງ ຫຼົງຮັກສາວສວັນ

ເນື້ອຮ້ອງທຳນອງ: ໜູ ນິຣາວັນ

ໄດ້ພົບສົບຕາ ຄັ້ງໜຶ່ງໄດ້ມາ ພົບສາວສວັນ
ຊ່າງງງາມສົມດັ່ງລືກັນ ວ່າສາວສວັນ ນັ້ນງາມໜັກໜາ
ຮອຍຍິ້ມກໍຫວານ ຝັງຈິດຕິດໃຈ ສາວສຸນັນທາ
ສຳນວນອ່ອນຫວານວາຈາ ເຫັນແລ້ວພາ ໃຫ້ອ້າຍຫຼົງໄຫຼ

ຄາວອ້າຍໄດ້ມາ ຍັງຈຳຕິດຕາ ຝາກຝັງຮີດີ
ທົ່ງວຊົມຄັນທະບູຣີ ສາວງາມໃຈດີ ຢູ່ຄຸ້ມໂພໄຊ
ອີກສາວນາແກ ເຈົ້າຊ່າງເລີດແທ້ ສົມຊື່ລືໄກ
ໂພນສວັນທ່າແຮ່ໃສໄລ ເຖິງຄາວຈາກໃກ ຫົວໃຈຄ່ຳຄວນ

ສາວໄຊຍະພູມ ພາໃຫ້ໜຸ່ມ ຄືນນີ້ຫຼົງໄຫຼ
ຮອຍຍິ້ມຍັງຝັງໃຈ ບໍ່ຢາກຈາກໄກ ສາວດົງລຳດວນ
ນາເຊັ່ງຮ່ອງແຊງ ອ້າຍຂໍແບ່ງ ຫົວໃຈເນື້ອນວນ
ຫຼົງຮັກສາວດົງລຳດວນ ພາອ້າຍຄ່ຳຄວນ ຝັນເພີ້ບໍ່ຫາຍ

ເມື່ອພົບສົບຕາ ບໍ່ຢາກຈາກລາ ໄກເມືອງສວັນ
ຍ້ອນໜ້າທີ່ການງານ ຈຶ່ງຕ້ອງພານ ພາກນ້ອງຄົນດີ
ຈອມແກ້ວຫຼັກສາມ ສົມຊື່ສົມນາມ ກຸລສັຕຣີ
ເຈົ້າງາມເລີດລ້ຳນາຣີ ຂໍຝາກຮີດີ ສາວເມືອງສວັນ